( <u>ຕຳນານ ນະໂມ</u> )

## ສັມມາສັມພຸທໂທ

### <u>ສັມມາສັມພຸທໂທ ທັມມະເທສນາ ພຣະພຸທຄຸນ ໃວ້ດັ່ງນີ້</u>

**ສັມມາສັມພຸທໂທ** -ແປຕາມສັບວ່າ-**ຕຣັສຮູ້ດວ້ຍພຣະອົງເອງໂດຍຊອບ** -ຫຣືນັຍນຶ່ງວ່າ-ຕຣັສຮູ້ເອງໂດຍຖືກຕອ້ງຫຣືເວົ້າໃຫ້ສັ້ນກໍ່ວ່າ-**ຮູ້ຖືກເອງ** -ເພື່ອໃຫ້ໃກ້ກັບພາສາສາມັນທີ່ໃຊ້ກັນວ່າ-**ຮູ້ຜິດຮູ້ຖືກ** -ໄດ້ແກ່ຄຳທີ່ເວົ້າຕິຕຽນຄົນທີ່ທຳອັນໄດຜິດພາດໄປວ່າ-ຄົນບໍ່ຮູ້ຖືກຮູ້ຜິດ -ທຳໄປຢ່າງໂງ່ ໆດັ່ງນີ້ເປັນຕົ້ນແຕ່ແທ້ຈິງແລ້ວພຸທໂທ -ຄຳນີ້ເມື່ອວິເຄາະໃຫ້ເລີກຊຶ່ງລົງໄປຕາມຮູບສັບແລ້ວ ມີຄວາມໝາຽເລີກຊຶ່ງຫລາຽ ຕ່າງກັນໄກກັບຄຳວ່າ-**ຊານະ** -ຫຣື -**ວິຊານະ** -ຊຶ່ງແປວ່າ-**ຮູ້ແຈ້ງ**-ນັ້ນ ດັ່ງນັ້ນ -**ພຸທໂທ** -ຈຶ່ງໄດ້ແປກັນວ່າ-**ຕຣັສຮູ້** -ບໍ່ໃຊ້ຮູ້ເສີຍ ໆເຕີມຄຳວ່າ-**ຕຣັສ** -ນຳໜ້າ-**ຮູ້** -ຊຶ່ງສະກົດໃຫ້ສົນໃຈວ່າ-ຮູ້ -ກັບ -ຕຣັສຮູ້ -2 -ຄຳນີ້ມີຄວາມໝາຽເລີກຕື້ນກົ່ວກັນແນ່ໂດຍບໍ່ສົງສັຍ

ເມື່ອຣະລຶກເຖີງພຣະບາລີໃນ -**ທັມມະຈັກ ກັບປວັດຕົນສູດທີ່ວ່າ-ຈັກຂຸ ອຸທປາທິຍານ ອຸທປາທີປັນຍາ ອຸທປາທິວິຊຊາ ອຸທປາທິອາໂລໂກ ອຸທປາທິ** -ຈຶ່ງທຳໃຫ້ແລເຫັນຄວາມວ່າຄຸນວິເສສທັງ -5 -ຢ່າງ ດັ່ງບາລີທີ່ຍົກຂຶ້ນກາ່ວນີ້ ຈະເປັນຄວາມໝາຽແຫ່ງຄຳວ່າພຸທໂທ ກາ່ວຄື-**ຈັກຂຸ ຍານປັນຍາ ວິຊຊາ ອາໂລໂກ** -5 -ຢ່າງນີ້ ປະມວນເຂົ້າດວ້ຍກັນ ຣວມເປັນຄຳແປຂອງຄຳວ່າ(**ພຸທໂທ**)ຫຣືຈະແປໃຫ້ສັ້ນເຂົ້າອີກ ຄຳວ່າ(**ພຸທໂທ**)ກໍ່ຍັງຕອ້ງແປວ່າ-ທັງຮູ້ທັງເຫັນ -ບໍ່ໃຊ້ຮູ້ເສີຍ ໆອາສັຍຄຳວ່າ-**ຈັກຂຸ ຍານ** -ໃນບາລີທີ່ຍົກຂຶ້ນກາ່ວມານັ້ນເປັນເຄື່ອງປະກອບ ຍິ່ງກົ່ວນັ້ນຍັງມີຄະວ່າ-**ຊານຕາ ປະສຸສຕາ ໃນມະຫາສຕິປັທຖານສູຕ** ຢູ່ອີກ ຊຶ່ງເປັນເຫດສນັບສນູນວ່າ ທີ່ພຣະພຸທເຈົ້າຕຣັສຮູ້ນັ້ນ ບໍ່ໃຊ້ຮູ້ເສີຍ ໆເປັນທັງຮູ້ທັງເຫັນ

ທີ່ວ່າ-**ເຫັນ** -ນັ້ນ ບໍ່ໄດ້ໝາຽຄວາມວ່າເຫັນຢ່າງຕາເຮົາເຫັນອັນໄດແທ້ ໆແຕ່ພຣະອົງເຫັນດວ້ຍຕາທັມມະກາຍ ແລະການທີ່ພຣະອົງເຫັນນີ້ໂດຍບໍ່ໄດ້ມີຜູ້ໄດສອນໃຫ້ຮູ້ສອນໃຫ້ເຫັນ ຮູ້ເຫັນໂດຍລຳພັງພຣະອົງເອງແລະສິ່ງທັງຫລາຽທີ່ພຣະອົງຮູ້ເຫັນນັ້ນ ຕຣົງຕາມຄວາມເປັນຈິງທັງນັ້ນ ບໍ່ໃຊ້ຄາດຄະເນຫຣືປະມານເອົາ-ຈຶ່ງເປັນອົງສັມມາສັມພຸທໂທ ພຣະຜູ້ຕຣັສຮູ້ເອງໂດຍຊອບ -ຫຣືນັຍນຶ່ງວ່າໂດຍຖືກຕອ້ງຕົງຕາມຄວາມເປັນຈິງທຸກປະການ ຈຶ່ງໄດ້ຊື່ວ່າ-**ຕຣັສຮູ້** -ຍັງມີຄຳວ່າ-**ສັມ** -ນຳໜ້າ-**ພຸທທະ** -ເຕີມເຂົ້າມາອີກຄຳນຶ່ງ ຊຶ່ງແປວ່າດວ້ຍພຣະອົງເອງ ຄືບໍ່ຕອ້ງມີຜູ້ສັ່ງສອນ

**ພຣະອົງທຳຈັ່ງໄດຈຶ່ງຕຣັສຮູ້ດວ້ຍພຣະອົງເອງເຊັ່ນນັ້ນ** -ຂໍ້ນີ້ຕອບບໍ່ຍາກ ພຣະອົງຕຣັສຮູ້ດວ້ຍພຣະອົງເອງໄດ້ ກໍ່ເພາະຄວາມເປັນ(**ອໍຣະຫັນ**)ຂອງພຣະອົງ ດັ່ງທີ່ກາ່ວມາຂາ້ງຕົ້ນແລ້ວນັ້ນເອງ ຄືເມື່ອອຳນາຈສະມາທິ ທຳໃຫ້ຈິດຂອງພຣະອົງຫລຸດພົ້ນຈາກອາສະວະແລ້ວ ຈິດຂອງພຣະອົງກໍ່ໃສຍິ່ງ ຢຸດ ແລະ ບໍຣິສຸທຜຸດຜອ່ງ ເພາະຢຸດນີ້ງນັ້ນເອງ ຈຶ່ງມີສິ່ງນຶ່ງເວົ້າຂຶ້ນໃນນີ້ງ ທຳໃຫ້ຫູພຣະອົງກໍ່ຮູ້ຕາມນັ້ນໄປ -ນ້ຳຂຸ່ນແມ່ນມີຫີນຈັກກອ້ນນຶ່ງ ຢູ່ກົ້ນໃຫໂອ່ງເຮົາກໍ່ແນມບໍ່ເຫັນ ແຕ່ຖາ້ນ້ຳນັ້ນນອນນີ້ງໃສບໍຣິສຸດແລ້ວ ເຂັມຢູ່ກົ້ນໃຫໂອ່ງ ເຮົາກໍ່ເຫັນສັນໄດກໍ່ສັນນັ້ນ

ຍັງມີຄວາມວ່າ-**ສມມາ** -ນຳໜ້າ-**ສມພຸທໂທ** -ອີກຄຳນຶ່ງ ຄຳວ່າ-**ສມມາ** -ແປວ່າ-**ໂດຍຊອບ** -

ຫຮື-**ໂດຍຖືກຕອ້ງ**-ພຣະອົງຕຣັສຮູ້ອັນໃດ ມີເຫດຜົນຢັນກັນໄດ້ສເມີ ຈື່ງໄດ້ຊື່ວ່າຖືກຕອ້ງ ເພາະການເວົ້າອັນໃດບໍ່ມີເຫດຜົນຮັບສົມ ຫຮືຢັນກັນນໍາໄດ້ແລ້ວຕາມຫລັກທັມມະດາເອີ້ນວ່າບໍ່ຖືກ ຕອ້ງມີເຫດຜົນຮັບສົມກັນຈື່ງຈະນັບວ່າຖືກ ພຣະສັທທັມ ຄໍາສອນຂອງພຣະອົງມີເຫດຮັບສົມກັນຢູ່ສເມີ ບໍ່ຄາດເຄື້ອນຈື່ງສົມຄວນແລ້ວທີ່ໄດ້ພຣະເນມິຕຕົກນາມວ່າ-**ສມມາ ສມພຸທ ໂທ**-

**ພຣະພຸທທະວະຈະນະ ທີ່ຄວນນໍາມາເວົ້າຖົກໃນທີ່ນີ້**-ວ່າແຕ່ ໂດຍສັ້ນ ໆກໍ່ວ່າ-ພຣະອົງຕຣັສຮູ້ເຫດຕຣັສຮູ້ຜົນ-ບໍ່ໄຊ້ຮູ້ແຕ່ເຫດຫຮືຮູ້ແຕ່ຜົນ ພຣະອົງຕຣັສຮູ້ທັງເຫດ ຕຣັສຮູ້ທັງຜົນ ທີ່ນີ້ຄືອັນໄດເຫດສຸຂເຫດບໍ່ສຸຂບໍ່ທຸກ-ຫຮືທີ່ເອີ້ນວ່າ ອັພຍາກອນ ຄືສະພາບເປັນກາງ ໆທັງ-3-ຢ່າງນີ້ເປັນຮາກຖານແຫ່ງການຕຣັສຮູ້ຂອງພຣະອົງ ກ່າວຄືສຸຂ ພຣະອົງກໍ່ບໍ່ຊົງຮູ້ແຕ່ສຸກເສີຍ ໆຕຣັສຮູ້ລຶກຊຶ່ງເຂົ້າໄປເຖີງວ່າ ອັນໄດເປັນເຫດໃຫ້ເກີດສຸຂດວ້ຍແລະອີກ-2-ປະການນັ້ນກໍ່ເຊັ່ນດຽວກັນ ຮູ້ທັງເຫດຮູ້ທັງຜົນຄືສຸຂດັ່ງກ່າວນັ້ນ ພຣະອົງຕຣັສໄວ້ວ່າ**ອະ ໂລພະ ອະ ໂທສະ ອະ ໂມຫະ**-ບໍ່ ໂລບບໍ່ ໂກດບໍ່ຫລົງ( ແປຢ່າງຢໍ້ທີ່ສຸດ-3-ປະການນີ້ແຫລະເປັນເຫດ ດັ່ງມີໃນບາລີເປັນທີ່ຢືນຢັນວ່າ-**ກຸສລາທັມມາ ອະກຸສລາທັມມາ ອະພະຍາກະຕາທັມມາ**-ເປັນອາທິ

**ໂລກ ໂກດຫລົງ** ເປັນຝ່າຍອະກຸສົນ ຕຣັສວ່າເປັນເຫດແຫ່ງທຸກ ເຮົາບຸທຸຊົນມັກຮູ້ກັນແຕ່ຜົນ ສາວເຫດບໍ່ໄປເຖີງ ເຊັ່ນຄົນທໍາໂຈຣະກັມແລ້ວໄປຕອ້ງໂທສຢ່າງຫລາຽ ທີ່ຮູ້ກັນທົ່ວໄປມັກຢູ່ໃນຂັ້ນຫຍາບ ໆວ່າ ຜົນທີ່ຕອ້ງໄດ້ຮັບທຸກ ຄືການຕອ້ງໂທສນັ້ນເນື່ອງມາຈາກ ໂຈຣະກັມ ກໍ່ຈະໄດ້ຄວາມວ່າເພາະ **ໂລພະ**ເປັນມູນເຫດ ແຕ່ກໍ່ຍັງບໍ່ພໍຕອ້ງສາວເຂົ້າໄປອີກວ່າ ເປັນຫຍັງ**ໂລພະ**ຈື່ງຄອບງັມເຂົາໄດ້ ກໍ່ຈະໄດ້ຄວາມວ່າຈິຕໃຈຂອງເຂົາສົກປົກ-ເປັນຫຍັງຈິຕໃຈຂອງເຂົາຈື່ງສົກປົກ ຈື່ງໄດ້ເຫດວ່າ-ເພາະເຂົາບໍ່ປະພຶດຕາມ ໂອວາສພຣະບໍຣົມສາສດາ ຢ່າງນອ້ຍກໍ່ເປັນຄົນທຸສີນ ອະທິນນາທານຂາດໄປເສັຽອົງນຶ່ງແລ້ວ ເຫດໄດເຂົາຈື່ງເປັນຄົນທຸສີນ ກໍ່ຈະໄດ້ຄວາມວ່າເຂົາບໍ່ຮູ້ສີນ ຫຮືຮູ້ແລ້ວບໍ່ນໍາພາ-ເປັນຫຍັງຈື່ງບໍ່ຮູ້ເຣື່ອງສີນ-ກໍ່ອາຈເປັນເພາະເຫດທີ່ເຂົາບໍ່ເຄີຍອ່ານໜັງສືທາງພຣະພຸທສາສນາ ຫຮືສະດັບຮັບຟັງພຣະທັມມະເທສນາ ດັ່ງນີ້ເປັນຕົ້ນ-ພຣະອົງຊົງສອນໄວ້ລະດຽດຖີ່ຖວ້ນວ່າ ໃຫ້ຮູ້ເທົ້າເຖີງເຫດຜົນຮູ້ວ່າຜົນນີ້ເກີດຈາກເຫດໄດ ພຣະອົງມີແນວສອນໃຫ້ປະຕິບັຕເພື່ອລະເຫດທີ່ໃຫ້ເກີດທຸກ ບໍາເພັນເຫດທີ່ໃຫ້ເກີດສຸຂຕຣອດຈົ່ນເຖີງວິທີທາງ ດັບເຫດທັງປວງຊຶ່ງເອີ້ນວ່າ-**ນິ ໂຣທ**-

ເພື່ອຮັບສນອງຂໍ້ຄວາມດັ່ງກ່າວມາ ກໍ່ມີຖອ້ຍຄໍາຂອງພຣະອັສສະຊິເຖຣະເປັນຫລັກຖານ ສນອງຮັບຮອງພຣະພຸທວະຈະນະດັ່ງກ່າວມາ ຄືພາຍຫລັງແຕ່ສົມເດັຈພຣະສັມມາສັມພຸທເຈົ້າ ຕຣັສຮູ້ໃໝ ໆພຣະອັສສະຊິເຖຣະຊຶ່ງເປັນພຣະສາວົກ ໄດ້ປະກາສພຣະສາສນາ ໄປພົບກັບອຸປຕິສະປະຣິບພາຊົກ ອຸປຕິສະປະຣິບພາຊົກ ຕັ້ງກະທູ້ຖາມກັນສັ້ນ ໆເຖີງເຣື່ອງພຣະສາສດາວ່າ ຊົງສັ່ງສອນຢ່າງໄດ ພຣະອັສສະຊິ ໄດ້ຕອບວ່າ ຊົງສອນເຖີງເຫດແລະວິທີທາງທີ່ຈະຫລັບເຫດເລົ່ານັ້ນ ດັ່ງພຣະບາລີວ່າ-**ເຍທັມມາເຫຕຸ ປະພະຄະວາ- ເຕສະ ເຫຕຸ ຕະຖະຄະ ໂຕ**-ຫຮືເວົ້າຢ່າງສັ້ນອີກນອ້ຍຍິ່ງວ່າ ພຣະອົງສອນໃຫ້ຮູ້ອັນໄດຊົ່ວອັນໄດດີອັນໄດເປັນເຫດຂອງຄວາມຊົ່ວອັນໄດເປັນເຫດຂອງຄວາມດີ **ໂລພະ-ໂທສະ-ໂມຫະ** ເປັນເຫດແຫ່ງຄວາມຊົ່ວຫຼືຄວາມເສື່ອມ **ອະ ໂລພະ-ອະ ໂທສະ-ອະ ໂມຫະ**ເປັນເຫດແຫ່ງຄວາມດີຫຮືຄວາມຈະເຣີນ ຊົງສອນວ່າ ກອ່ນຈະເວົ້າ ຈະຄິດ ຫຼືທໍາສິ່ງໄດຈົ່ງມີສະຕິ ຫຼືທີ່ເອີ້ນວ່າຄວາມຄິດ

ໃຫ້ຮອບຄອບເສັຽກ່ອນຈຶ່ງເວົ້າ ຈຶ່ງຄິດຈຶ່ງທຳການນັ້ນໆແລະວ່າໂດຍສະເພາະຈົ່ງຣະວັງເຣື້ອງ-**ໂລພະ**-**ໂທສະ ໂມຫະ**-ນັ້ນໄວ້ຢ່າໃຫ້ເຂົ້າຄອບງັບໄດ້ ໃນເມື່ອຈະທຳຈະເວົ້າຄິດການສິ່ງໃດ ພຣະອົງຊົງໄວ້ໃນທາງປະຣະມັຕວ່າ ທັມມະດາຈິດນັ້ນໃສບໍຣິສຸທຢູ່ສເມີ ຊຶ່ງໝາຽຄວາມວ່າຈິດທີ່ບໍ່ມີກິເລສຜສົມ ສ່ວນພວກກິເລສເຊັ່ນ **ໂລພະ**-ເອີ້ນວ່າເປັນຂອງໂຈນມາເມື່ອມາຕອ້ງພານຈິດກໍ່ຍອ້ມຈິດໃຫ້ເປັນໄປຕາມສະພາບອັນຊົ່ວຊ້າຂອງກິເລສນັ້ນ ໆຈິດແຕ່ຣະຄົນດວ້ຍ**-ຣາຄະ**-ຫຼື **ໂລພະ** ສີແດງ-ແຕ່ຣະຄົນດວ້ຍ**ໂທສະ**-ສີດຳ-ແຕ່ຣະຄົນ**ໂມຫະ**-ຂຸ່ນເໝືອນຂີ້ຕົມ ຫຼືນ້ຳລ້າງເນື້ອ-ສິ່ງເລົ່ານີ້ພຣະອົງຫາຕາມທັມມະກາຍເໝມເຫັນແທ້ ໆພວກເຮົາເລົ່າສາສນິກະຊົນ ເມື່ອຮຽນພາວະນາເຖິງຂນາດຈະເຫັນຈິງດວ້ຍຕົນເອງ-ການປະຕິບັຕກິຈທາງພາວະນານັ້ນກໍ່ຄື ພະຍາຍາມກັນເອົາກິເລສອອກເສັຽຈາກຈິຕ ໃຫ້ຈິຕໃຈບໍຣິສຸທ ອັນໄດ້ຊື່ວ່າກິຣິຍາຈິຕກິຣິຍາຈິຕເຊັ່ນນີ້ເປັນອັພຍາກົຕແລ້ວ ຕໍ່ນັ້ນໄປຈະເປັນຈິຕ ທີ່ຄອນແກ່ການທຸກຢ່າງ

**ພຣະທັມມະເທສນາຂອງພຣະອົງ** ເມື່ອຕອນຕຣັສຮູ້ໃໝ່ ໆໜັກໄປໃນທາງສແດງເຫດແລະການດັບເຫດຫຼືທີ່ເອີ້ນວ່າ-**ສະມຸທັຍ**-ກັບ **ນິໂຣທ** ດັ່ງເຊັ່ນໃນການໃຫ້ພິຈາຣະນາເຣື້ອງສັງຂານ ໃນດາ້ນສະມຸທັຍ ວ່າ **ອະວິຊຊາປັຈຍາ ສັງຂາຣາ**-ແລະໃນດາ້ນ-**ນິໂຣທ**-ວ່າ **ອະວິຊຊາ ເຕວະ ອະເສວິຣາຄະນິໂຣທາ** ໃນດາ້ນ-**ສະມຸທັຍ**-ນັ້ນແປຄວາມເປັນພາສາວ່າ ອະວິຊຊາ ເປັນປັດຈັຍໃຫ້ເກີດສັງຂານ-ສັງຂານ ເປັນປັດຈັຍໃຫ້ເກີດວິນຍານ-ວິນຍານເປັນປັດຈັຍໃຫ້ເກີດນາມຮູບ-ນາມຮູບ ເປັນປັດຈັຍໃຫ້ເກີດອາຍົຕນະ-6 ອາຍົຕນະ-6-ເປັນປັດຈັຍໃຫ້ເກີດຜັສສະ-ຜັສສະ ເປັນປັດຈັຍໃຫ້ເກີດເວທນາ-ເວທນາ ເປັນປັດຈັຍໃຫ້ເກີດຕັນຫາ-ຕັນຫາ ເປັນປັດຈັຍໃຫ້ເກີດອຸປາທານ-ອຸປາທານ ເປັນປັດຈັຍໃຫ້ເກີດພົບ-ພົບ ເປັນປັດຈັຍໃຫ້ເກີດຊາຕ-ຊາຕເປັນປັດຈັຍໃຫ້ມີຄວາມແກ່ ຄວາມຕາຍແລະຄວາມເສົ້າໂສກຕ່າງ ໆສິ່ງເລົ່ານີ້ຈະດັບໄດ້ກໍ່ເພາະຊາຕດັບ-ຊາຕດັບໄດ້ກໍ່ເພາະພົບດັບ-ພົບຈະດັບໄດ້ກໍ່ເພາະອຸປາທານດັບ-ອຸປາທານຈະດັບໄດ້ເພາະຕັນຫາດັບ-ຕັນຫາຈະດັບໄດ້ກໍ່ເພາະເວທນາດັບ-ເວທນາຈະດັບໄດ້ເພາະຜັສສະດັບ-ຜັສສະຈະດັບໄດ້ກໍ່ຕໍ່ເມື່ອອາຍົຕນະດັບ-ອາຍົຕນະຈະດັບໄດ້ກໍ່ຕໍ່ເມື່ອນາມຮູບດັບ-ນາມຮູບຈະດັບໄດ້ກໍ່ຕໍ່ເມື່ອວິນຍານດັບ-ວິນຍານຈະດັບໄດ້ກໍ່ຕໍ່ເມື່ອສັງຂານດັບ-ສັງຂານຈະດັບລົງກໍ່ເພາະອະວິຊຊາດັບ-ເຫດຜົນເກີດດັບກງ່ວຂອ້ງກັນເປັນລູກໂຊ້ເຊັ່ນນີ້ ເອີ້ນວ່າ-**ປັດຈະຍາການ**-ທີ່ພຣະອົງໄດ້ຮູ້ແຈ້ງແທ້ຕຣອດໃນວັນ ຕຣັສຮູ້ນັ້ນທັງສິ້ນ

**ຕອ້ງພິຈາຣະນາຕາມລຳດັບ**-ດັ່ງທີ່ຍົກຂຶ້ນກ່ອນມາຂາ້ງຕົ້ນເມື່ອຢອ້ນໃຫ້ໄດ້ຄວາມເຂົ້າໃຈອັນຈະເປັນຜົນໃນທາງປະຕິບັຕແລ້ວກໍ່ມີຕົວສຳຄັນອັນດຽວຄື ວິຊຊາເປັນມູນຮາກຝ່າຍເກີດຫຼືທີ່ເອີ້ນວ່າສະມຸທັຍ ແລະໃນທາງດັບ ຫຼືທີ່ເອີນວ່າ ນິໂຣທ ກໍ່ທຳນອງດຽວກັນ-ອະວິຊຊາ ເທົ່ານັ້ນເປັນຕົວການສຳຄັນ ຖາ້ດັບອະວິຊຊາບໍ່ໄດ້ແລ້ວ ກໍ່ບໍ່ມີຫວັງວາ່ຢ່າງອື່ນຈະດັບໄດ້ ທີ່ໝາຽສຳຄັນໃນຄຳສອນຂອງພຣະອົງ ຈຶ່ງຢູ່ທີ່ວ່າ ໃຫ້ຜູ່ປະຕິບັຕພຽນຫາທາງກຳຈັດ ອະວິຊຊາເສັຽ ຈຶ່ງຈະພົ້ນຈາກຫວ່ງເລິກ ຄືວັທຖຸສົງສານໄດ້

**ອະເນກະຊາຕະສະສາຣະ**-ໃນຂນະເມື່ອແສງທອງຮຸ່ງເຮືອງແຂ່ງແສງເງິນຂຶ້ນມາຍັງຂອບຟາ້ເບື້ອງບຸຣະພາ ອັນເປັນສັນຍາວ່າດວງອາທິຕ ຕຽມທຳໜາ້ທີ່ຈະສອ່ງໂລກຢູ່ແລ້ວ ເປັນເວລາທີ່ອາກາສຍະເຢືອກເຢັນສົດຊື່ນ ສົ່ງໃຫ້ເຮົາຫວນໄປຣະນຶກເຖິງເວລາຮຸ່ງອາຣຸນແຫ່ງວັນເພັນວິສາຂມາສ

ອັນເປັນວັນທີ່ພຣະບໍຣົມ ໂລກນາຖອໍຣະຫັນຕະສໍາມາສັມພຸທ ໂທເຈົ້າ ຕຣັສຣູ້ ອະນຸດຕະຣະສັມມາສັມ ໂພ
ທິຍານນັ້ນ ເຮົາຈະແລເຫັນ ໂອພາສຣັສມີອັນຮຸ່ງ ໂຣຈຍິ່ງກົ່ວແສງທອງນັ້ນ ຣອ້ຍເທົ້າພັນທະວີຊວ່ງ ໂຊຕ
ຢູ່ພາຍໄຕ້ ໂພທິສົມພານ ໃບຂຽວຊະອຸ່ມຮັບກັບຣັສມີອັນເຫລືອງອະຣາມຢູ່ພາຍໄຕ້ນັ້ນ ໃນໃຈກາງແຫ່ງ
ຣັສມີອັນຊວ່ງ ໂຊຕຊັຊວານຢູ່ນັ້ນ ບໍ່ໄຊ້ອື່ນໄກ ຄືອົງສົມເດັຈພຣະສັມມາສັມພຸທເຈົ້າຂອງເຮົາ ປະທັບ
ຢື່ນຢູ່ດວັຍພຣະອາການຊື່ນບານພຣະຫັດທັຍທີ່ໄດ້ສເວີຍວິມຸດຕິສຸຂ ອັນເປັນຜົນແຫ່ງການທີ່ພຣະອົງໄດ້
ຊົງປະກອບພຣະມະຫາປະທານວິຣິຍະມາເປັນເວລາຊ້ານານ ຈຶ່ງໄດ້ບັນລຸອະນຸດຕະຣະສັມມາສັມ ໂພທິ
ຍານ ສົມດັ່ງພຣະຫັດຫຼືທັຍປະສົງ ພຣະອົງຈຶ່ງຊົງເປັ່ງພຣະອຸທານເຍີຍທັນທາວ່າ-**ອະເນກະຊາຕະສະສາ
ຣະ** ດັ່ງທີ່ໄດ້ຍົກຂື້ນກ່າວໄວ່ຂ້າງຕົ້ນນັ້ນຊຶ່ງແປໃຈຄວາມເປັນພາສາລາວວ່າ-**ເຮົາສືບຊອກຫາຕົວຊ່າງ
ໄມ້ສ້າງປຣາສາທມານານແລ້ວ ເມື່ອເຮົາຍັງຫາບໍ່ພົບເຮົາຕອ້ງທ່ອງທ່ຽວຢູ່ໃນສົງສານ ວຽນວາຽຕາຍ
ເກີດຢູ່ເພາບຈະນັບຊາຕບໍ່ຖວ້ນ ການເກີດນໍາຄວາມທຸກມາໃຫ້ເຮົາແລ້ວໆເລ່າະໆ ບໍ່ຮູ້ຈັກຈົບສີ້ນນີ້ແລະ
ທ່ານນາຍຊ່າງປຣາສາທ ຄືຕັນຫາ ບັດນີ້ເຮົາເຈີະຕົວທ່ານແລ້ວລ່ະ ທ່ານໝົດ ໂອກາສທີ່ຈະມາສ້າງປຣາ
ສາທ ຄືອັຕພາບຮ່າງກາຍເຮົາຕໍ່ໄປໄດ້ອີກແລ້ວ ກະດູກຊີກ ໂຄງທ່ານກ່າວຄື ກິເລສ ເຮົາຫັກສຽກຮອບ
ໝົດແລ້ວ ຈິດຂອງເຮົາປຣາສຈາກເຄື່ອງປຸງແຕ່ງແລ້ວ ເຮົາເຖິງຊື້ງຄວາມສີ້ນໄປແຫ່ງຕັນຫາແລ້ວ**

  ພຣະອຸທານນັ້ນມີຂໍ້ຄວາມເປັນບຸຄຄະລາທິສະຖານສັ້ນ ໆແຕ່ມີອະຣັນພອນລຶກຊຶ້ງໝ້າສົນໃຈເປັນຢ່າງ
ຍິ່ງ ທີ່ແປຄະທະກູຖະ ວ່າຍອດປຣາສາທກໍ່ເພື່ອຄວາມເໝາະສົມ ທີ່ພຣະອົງເປັນກະສັຕ ເພາະບ້ານເຮືອນ
ຂອງພຣະມະຫາກະສັຕ ເອີ້ນກັນວ່າ ປຣາສາທຣາຊຖານ ພຣະອຸທານນັ້ນ
ມີຂໍ້ຄວາມຊັດເຈັນແລ້ວ ບໍ່ຈໍາຕອ້ງອະທິບາຍ

## ພຣະບໍຣົມຣາຊະ ໂອວາທ

ທຸກຄົນຕ່າງມີໜ້າທີ່ ແຕ່ກໍ່ບໍ່ໄດ້ໝາຽຄວາມວ່າ ເຮັດສະເພາະໜ້າທີ່ນັ້ນ ເພາະວ່າຖ້າຄົນໃດເຮັດໜ້າທີ່ສະ
ເພາະຂອງຕົນ ໂດຍບໍ່ເບິ່ງແລຄົນອື່ນວຽກກໍ່ດໍາເນີນໄປບໍ່ໄດ້ ເພາະເຫດວ່າງານທຸກງານຈະຕອ້ງພາເພິ່ງ
ເຖິງກັນ ຈະຕອ້ງກ່ຽວ ໂຍງກັນສະນັ້ນ ແຕ່ຣະຄົນຈະຕອ້ງຮູ້ເຖິງວຽກງານຂອງຜູ້ອື່ນ ແລ້ວຊວ່ຍກັນທໍາ
-ເຍົາວະຊົນທັງຫລາຽທີ່ຢູ່ໃນໄວຮຽນ ຍອ່ມມີຄວາມມຸ້ງມັນທີ່ຈະສຶກສາວິຊາການຕ່າງ ໆ ໃຫ້ໄດ້ຫລາຽ ໆ
ເພື່ອນໍາໄປໄຊ້ທໍາປະ ໂຍດ ສ້າງສົມຄວາມສຸຂຄວາມຈະເຣີນ ໃຫ້ແກ່ຕົນເອງຕຣອດຈົ່ນເຖິງສວ່ນຣວມ ແຕ່
ການໄຊວິຊາຄວາມຮູ້ນັ້ນ ຈໍາເປັນຈະຕອ້ງໄຊ້ຢ່າງຖືກຕອ້ງ ດວ້ຍຄຸນນະທັມແລະຄວາມສາມາດທີ່ເໝາະ
ສົມ ຈຶ່ງຈະໄດ້ຜົນເຕັມປຽບ-ໂບຣານວັຕຖຸສິລປະວັຕຖຸ ແລະ ໂບຣານສະຖານທັງຫລາຽ ເປັນຂອງມີຄຸນ
ຄ່າແລະຈໍາເປັນແກ່ການສຶກສາຄົ້ນຄົ້ວໃນທາງປະວັຕສາສ ສິລປະ ໂບຣານຄະດີເປັນການສະແດງເຖິງ
ຄວາມຈະເຣີນຮຸ່ງເຮືອງຂອງຊາຕລາວ ທີ່ມີມາແຕ່ອະດີດຄວນສງວນຮັກສາໄວ້ ໃຫ້ຄົງທົນຖາວອນເປັນ
ສົມບັຕສວ່ນຣວມຂອງຊາຕໄວ້ຕຣອດການ

- ປະເພນີທັງຫລາຽຍອ່ມມີປະ ໂຍດ ໃນການດໍາເນີນຊີວິດຂອງແຕ່ຣະຄົນ ເຮົາມີປະເພນີ
ຂອງຊາຕລາວເປັນສົມບັຕເຮົາຄວນຈະຍິນດີຢ່າງຍິ່ງ ແລະຊວ່ຍກັນສົ່ງເສີມຮັກສາໄວ້
ເພື່ອຄວາມຈະເຣີນກ້າວໜ້າ ຂອງປະເທສຊາຕຂອງຕົນ

ບ້ານເມືອງຂອງລາວສາມາດຟັນຝ່າອຸປສັກຕ່າງ ໆໄດ້ໂດຍດີໃນອະດີດ ຂອງຄົນໂບຮານເພາະວ່າຈິດໃຈສາມັກຄີແລະສແດງອອກຊຶ່ງສາມັກຄີ ຖ້າຕາບໃດເຮົາຮັກສາຄວາມສາມັກຄີ ຄວາມເຫັນອົກເຫັນໃຈຊຶ່ງກັນແລະກັນໄດ້ ເຮົາກໍ່ຈະຢູ່ໄດ້ຢ່າງມີຄວາມສຸຂຕຣອດນັ້ນ ໆ

- ການທີ່ຈະທຳງານເພື່ອຄວາມໝັ້ນຄົງແລະກ້າວໜ້ານັ້ນ ບໍ່ໄຊ້ວ່າຈະກົ້ມໜ້າກົ້ມຕາທຳໜ້າທີ່ ຂອງແຕ່ຣະຄົນເທົ່ານັ້ນ ຈະຕອ້ງມີຄວາມຮ່ວມມືສັມພັນກັນ ຣະຫວ່າງໜ່ວຍງານທຸກໜ່ວຍ ເພື່ອໃຫ້ງານຄືບໜ້າໄປພອ້ມພຽງກັນ

- ການປະຕິບັຕຣາຊການ ໃຫ້ສຳເຣັດຜົນທີ່ພຶ່ງປະສົງນັ້ນ ນອກຈາກຈະອາສັຍຄວາມຮູ້ຄວາມສາມາດໃນທາງວິຊາການແລ້ວ ແຕ່ຣະບຸກຄົນຍັງຈະຕອ້ງມີຮາກຖານ ທາງຈິດໃຈທີ່ດີ ຄືຄວາມໜັກແໜ້ນໝັ້ນຄົງໃນສຸຈຣິຕທັມ ແລະຄວາມມຸ່ງມັ່ນທີ່ຈະປະຕິບັຕໜ້າທີ່ ໃຫ້ຈົ່ນສຳເຣັຈ ກະທັ້ງຕອ້ງມີກຸສໂລບາຍ ຫຼືວິທີການອັນແຍກຄາ້ຍ ໃນການປະຕິບັຕງານປະກອບກັນພອ້ມດວ້ຍ ຈຶ່ງຈະສັມເຣັຈຜົນທີ່ແນ່ນອນແລະບັງເກີດປະໂຍດອັນຍັ້ງຢືນ ທັງແກ່ຕົນເອງແລະແຜ່ນດິນຂອງຊາຕ

- ເທກໂນໂລຍີນັ້ນ ໂດຍຫລັກການ ຄື ການທຳໃຫ້ສິ່ງທີ່ມີຢູ່ໃຫ້ເກີດ ເປັນສິ່ງທີ່ນຳມາໄຊ້ປະໂຍດໄດ້ດັ່ງນັ້ນ ເທກໂນໂລຍີທີ່ດີສົມບູນ ຈຶ່ງຄວນຈະສາ້ງ ສິ່ງທີ່ຈະໄຊ້ປະໂຍດໄດ້ຢ່າງຄຸ້ມຄ່າແລະມີຄວາມສູນເປົ່າ ຫຼື ຄວາມເສັຽຫາຍ ທີ່ເກີດຂື້ນນອ້ຍທີ່ສຸດ

## ແທນຄວາມຮູ້ສຶກຂອງພໍ່
## ຄວາມບັນທຶກ ຄົນດີຂອງພໍ່

(1)ເຣີ້ມແຣກຄຳສອນຂອງພໍ່ ລູກຈຶ່ງຈຳໄວ້ວ່າ ເມື່ອມີບັນຫາຢ່າລະຖີ້ມໜ້າທີ່ ເພາະເມື່ອບໍ່ລະຖີ້ມໜ້າທີ່ ບັນຫາກໍ່ໝົດໄປ ດວ້ຍການທຳຕາມໜ້າທີ່-ທີ່ມີບັນຫາຢູ່ທຸກວັນນີ້ ເພາະຄົນເຮົາລະຖີ້ມໜ້າທີ່

(2)ໜ້າທີ່ຂອງຄົນ ເປັນສີ້ງທີ່ຕອ້ງປະຕິບັຕ ບໍ່ວ່າໃຜຫຼືຜູ້ໄດ ກໍ່ຕອ້ງມີໜ້າທີ່ຂອງຕົນແລະຜົນແຫ່ງການທຳໜ້າທີ່ໃຫ້ລູກຈະເຣີນ ຈັກທຳໃຫ້ລູກກາ້ວໜ້າ ຈັກທຳໃຫ້ລູກມີຄວາມສຸຂຕາມຖານະຈັກທຳໃຫ້ລູກມີຊີວິຕຕຣອດປອດພັຍ ຈັກທຳໃຫ້ລູກຢູ່ດີກິນດີ ຈະຕາຍກໍ່ຕາຍດີ

(3)ເມື່ອລູກພໍໃຈ ກໍ່ຢ່າໄປຢາກໄດ້ຈົ່ນເກີນໄປ ເມື່ອບໍ່ພໍ່ໃຈ ກໍ່ຢ່າໄປທຳລາຍສິ່ງນັ້ນເສັຽ ຕອ້ງຝຶກຫັດທຳໃຈໃຫ້ປອ່ຍວາງ ເມື່ອປອ່ຍວາງໄດ້ ກໍ່ບໍ່ເປັນໂຣຄປະສາທ ບໍ່ພາດຈາກຄວາມດີ

(4)ການກະທຳສິ່ງໄດ ຂໍໃຫ້ລູກຕຽມພອ້ມ ໝາຽເຖິງການກະຕຽມປອ້ງກັນແກ້ໄຂ ໄວ້ລວ່ງໜ້າ ໃນສິ່ງທີ່ຕົນເອງກຳລັງຈະທຳຢູ່ ຫຼືເຫດການນັ້ນໄກ້ຈະມາເຖິງ ການຕຽມພອ້ມຈຶ່ງເປັນການປອ້ງກັນແລະແກ້ໄຂບັນຫາໄດ້ຢ່າງດີທີ່ສຸດຂອງຕົນ

(5)ການສຶກສາເປັນສິ່ງທີ່ຕອ້ງກະທຳໃນທຸກເວລາທັງເວລາທີ່ເຮົາຍັງເລັກຫຼືມີອາຍຸຮຸ້ນໜຸ່ມສາວແມ່ນກະທັ້ງຍາ່ງເຂົ້າສູ່ໃນໄວຊະລາ(ພໍ່ແມ່ຂໍເຕືອນລູກວາ່)ຈຶ່ງມີສັນທະແລະຢ່າອວດຮູ້-ຈຶ່ງມີສັນທະໃນການຮຽນຮູ້ຝຶກຝົນແລະມີໃຈຮັກໃນການຮຽນຮູ້ຂອງຕົນນັ້ນ-ຢ່າອວດຮູ້ວ່າຂອ້ຍຮູ້ແລ້ວ-ຂອ້ຍທຳເປັນ-ຂອ້ຍເກັ່ງ ແລະຄິດວ່າທຳເອງໄດ້ ເພາະຄົນອວດຮູ້ ຄື ຄົນປະໝາດ ອັນຈັກນຳໄປສູ່ຄວາມເສັຽຫາຍໄດ້

(6)ຂໍໃຫ້ລູກຈຳໄວ້ວ່າ-ມີແຕ່ຄວາມນອ່ນນອ້ມ ຖອ່ມຕົນເທົ່ານັ້ນ ທີ່ຈະທຳໃຫ້ບຸນຄຸນ

ປະສົບຄວາມສຳເຮັຈໄດ້-ຄວາມໂອຫັງ ຍົກຕົນຂົ່ມທ່ານ-ຍົກຕົນເອງຂົ່ມໝູ່-ບໍ່ທຳ
ໃຫ້ໃຜປະສົບຄວາມສຳເຮັຈໄດ້ ເຖິງແມ່ນຈະເກີດມີຂື້ນແມ່ ກໍ່ມີໄດ້ບໍ່ດົນນານ

(7)ເມື່ອຈະເດີນທາງ ຕອ້ງຕຽມການເດີນທາງແລະຕອ້ງຕຽມແຜນການ ສຳຫລັບການເດີນທາງ ຕອ້ງຕຽມສະບຽງອາຫານ ຕອ້ງຕຽມພາຫານະ ຕອ້ງຕຽມເງີນທອງສຳຫລັບໄຊ້ຈ່າຍ-ທາງດາ້ນຮ່າງກາຍຕອ້ງຕຽມໃຫ້ພອ້ມແລະດາ້ນຈິດໃຈກໍ່ເຊັ່ນດຽວກັນ ຍິ່ງຕອ້ງຮູ້ຈັກຕຽມຈິດໃຈໃຫ້ພອ້ມ ຄື ບໍ່ປະໝາດ ຄົນໂບຮານຈຶ່ງກ່າວສອນໄວ້ວ່າ ຕຽມປອ້ງກັນໄວ້ ດີກ່ວາຈະຕາມແກ້ພາຍຫລັງ ເພາະເມື່ອຄາວຊວຍແລ້ວຈະແກ່ບໍ່ທັນ

(8)ທຸກຄົນເກີດມາຕອ້ງມີຄວາມຮັກຄືກັນທຸກຄົນ ເມື່ອລູກມີຄົນຮັກແລະຖາ້ເຂົາມາຮັກລູກທີ່ລູກຮ່າງມີຂອງລູກນັ້ນບໍ່ນານເຂົາຈະຖີ້ມລູກ-ແຕ່ຖາ້ເຂົາຮັກລູກ ທີ່ຈິດໃຈສວຍງາມຂອງລູກ ເຂົາກໍ່ຈະຮັກລູກຍັ້ງຍືນນານ-ລູກຈົ່ງພິຈາຣະນາໃຫ້ທີ່ຖວ້ນອັນສົມຄວນ ແລະລູກກໍ່ຄືກັນຈົ່ງຢ່າຮັກໃຜທີ່ຮູບງາມ ຂໍຈົ່ງຮັກເຂົາທີ່ຈິດໃຈງາມແລະຈົ່ງຮັກເຂົາທີ່ເປັນຄົນດີມີຄວາມກະຕັນຍູ ຈົ່ງຮັກເຂົາມີຄວາມອົດທົນຂຍັນໝັ່ນພຽນປະຢັດມັທຍັດ ທີ່ຊື່ສັຕແລະຖນອມຖອມຕົນເປັນຄົນຮູ້ບຸນຄຸນ ພໍ່ແມ່ເຖົ້າແກ່ ຍາດມິດທັງຫລາຽ

(9)ພຣະອາຈານຂານກ່າວໄວ້ໃນທັມວ່າ ມີຄົນຫລາຽຄົນທີ່ຈົນເພາະກິນ-ມີຄົນຫລາຍຄົນຊົ່ວເພາະການມີຄົນຫລາຽຄົນທີ່ຊົ່ວເພາະກຽດ-ເພາະສະນັ້ນຂໍໃຫ້ລູກຈົ່ງຣະວັງໃຫ້ດີ-ຈົ່ງມີກິນມີໄຊ້ໃຫ້ເປັນ ຈົ່ງມີການໃຫ້ເປັນ ຈົ່ງມີກຽດໃຫ້ເປັນ ເມື່ອມີກຽດໃຫ້ເປັນກໍ່ບໍ່ເປັນທຸກ ຖາ້ລູກມີບໍ່ເປັນ-ກໍ່ເປັນທຸກຢ່າງແນ່ນອນ

(10)ເມື່ອລູກຈັກຄິດຈັກເວົ້າຈັກທຳອັນໃດ ຂໍໃຫ້ເບິ່ງໄປຂາ້ງໜາ້ເບິ່ງໃຫ້ໄກໆ ເບິ່ງເຖິງອະນາຄົນຫຼືທີ່ເຂົາເອີ້ນວ່າ ເບິ່ງການໄກ-ເພາະຄົນທີ່ຈະປະສົບຄວາມສຳເຮັຈໃນຊີວີຕນັ້ນໆ ຈະຕອ້ງເປັນຜູ້ທີ່ເບິ່ງການໄກ ຄົນທີ່ເບິ່ງສັ້ນໆ ເບິ່ງໄກ້ໆ ເບິ່ງແຄມນັ້ນ ເຮັດສິ່ງໃດກໍ່ລົ້ມເຫລວເຖິງຈະປະສົບຄວາມສຳເຮັຈກໍ່ພຽງຣະຍະເວລາສັ້ນໆເທົ່ານັ້ນເອງ

(11)ໃນການເບິ່ງການໄກ ຄືການເບິ່ງຢ່າງຮອບຄອບຖວ້ນຖີ່ ບໍ່ປະໝາດຄິດເຖິງຜົນໄດ້ຜົນເສັຽ ຄິດເຖິງທາງໜີທີ່ໄລ່ໄວ້ລວ່ງໜາ້ ຄິດຫາວິທີຮຸກແລະຕັ້ງຮັບໄວ້ພອ້ມ-ຈາກນັ້ນຈົ່ງໃຫ້ລູກພິຈາຣະນາໃຫ້ຫລາຽ ໆ ຮອບຫລາຽ ໆດາ້ນ ການເບິ່ງການໄກນັ້ນຕອ້ງບໍ່ເບິ່ງ ແຕ່ປັຈຈຸບັນເທົ່ານັ້ນແຕ່ຕອ້ງເບິ່ງຂາ້ງໜາ້ເບິ່ງໄປເຖິງອະນາຄົດ ໃຫ້ເບິ່ງໄປເຖິງຮຸ່ນລູກຮຸ່ນຫລານ ທີ່ຈັກຕອ້ງເກີດມາແລະດຳລົງຕະກຸນສາຍເຊື້ອໂລຫິດ ໃຫ້ຍືນຍາວນານ ໆທີ່ສຸດ ເທົ່າທີ່ຈະນານໄດ້

(12)ຄຳໂບຮານວ່າໄວ້-ຮັກຍາວໃຫ້ຕັດ ຮັກສັ້ນໃຫ້ຕໍ່-ຄືວ່າ ຖາ້ເຮົາຢາກໃຫ້ມີອະນາຄະຕີ ມີຊີວິດທີ່ມີແຕ່ຄວາມສຸຂ-ກໍ່ຕອ້ງບັ້ນຄືຕັດຂາດຈາກອະບາຍຍະມຸກ ສິ່ງເສບຕິດຕັດຂາດຈາກຄວາມກຽດຄາ້ນຕັດຂາດຈາກຄວາມສຸຣຸ່ຍສຸຣ່າຍ ຕັດຂາດຈາກຄວາມຫຸນຫັນພະລັນແລ່ນ ຕັດຂາດຈາກຄວາມໂຮບຄວາມໂກດຄວາມຫລົງ ອິດສາຣິຊຍາ ເພາະສິ່ງເຫລົ່ານີ້ ຄອຍບັ່ນທອນອະນາຄະຕະຂອງເຮົາເອງສວ່ນຮັກສັ້ນໃຫ້ຕໍ່ນັ້ນ ຄື-ຖາ້ບໍ່ຄິດເຖິງອະນາຄົດ ບໍ່ຄິດເຖິງຄວາມສຸກຂອງຕົນເອງແລະຄອບຄົວກໍ່ໃຫ້ເຮັດຕໍ່ໄປໄດ້ແກ່ການຕິດອະບາຍຍະມຸກ ການສິ່ງເສັບຕິດ ຕິດຄວາມກຽດຄາ້ນ ຕິດໂລບຕິດໂກດ ຕິດຫລົງ ອິດສາຣິສະຍາ ເຊັ່ນນີ້ແລ້ວ ບໍ່ນານຊີວິດກໍ່ຈັກສັ້ນຢ່າງແນ່ນອນ

(13)ຄົນໂບຮານກ່າວໄວ້ວ່າ-ຄົນທີ່ບອກຮັກພໍ່ຮັກແມ່ນັ້ນ ແຕ່ບໍ່ເຄີຍເຮັດອັນໃດໃຫ້ທ່ານດີໃຈ ບໍ່ເຄີຍໃຫ້ແມ່ນແຕ່ຄວາມເຄົາຣົບ ບໍ່ເຄີຍໃຫ້ແມ່ນແຕ່ຄວາມເອົາອົກເອົາໃຈ ບໍ່ເຄີຍໃຫ້ແມ່ນແຕ່ຮອຍຍີ້ມ ບໍ່ເຄີຍໃຫ້ແມ່ນແຕ່ຄວາມເກັງໃຈ ບໍ່ເຄີຍໃຫ້ແມ່ນແຕ່ ນ້ຳໃຈແຕ່ເລັກໆນ້ອຍໆ ຢ່າງນີ້ຫຼືອັນທີ່ເວົ້າວ່າຮັກພໍ່ຮັກແມ່ນັ້ນ ມັນເປັນພຽງແຕ່ຄຳເວົ້າເທົ່ານັ້ນ ບໍ່ໄດ້ສແດງອອກໃນການກະທຳເລີຍ

(14)ລູກຈົ່ງເບິ່ງເຫັນວ່າພໍ່ແມ່ ຫຼືຍາດຜູ້ໃຫ່ຽເປັນເພື້ອນເລັ່ນຂອງລູກ ຈົ່ງຂາດຄວາມເກັງໃຈ ຂໍໃຫ້ລູກຈົ່ງເຄົາຣົບແລະໃຫ້ຄວາມເກັງໃຈ ໃນຕົວຜູ້ໃຫ່ຽຂອງລູກທຸກຄົນ-ເມື່ອເຂົາໃຫ້ຄວາມເປັນກັນເອງກັບລູກ ລູກຕອ້ງເຄົາຣົບແລະຢຳເກັງເຂົາ ອັນຕອ້ງເປັນນິສັຍຕິດຕົວລູກຕຣອດໄປ

(15)ພຣະອາຈານ  ທ່ານໄດ້ກ່າວວ່າ ຄົນເຮົາເມື່ອທຳຜິດຈົ່ງຄິດແກ້ໄຂແລະເມື່ອຈັກແກ້ໄຂນັ້ນ ກໍ່ໃຫ້ແກ້ໃນສິ່ງຈຳເປັນແລະສິ່ງນັ້ນ ສາມາດຣົດແກ້ໄດ້-ຢ່າພະຍາຍາມແກ້ໄຂໃນສິ່ງທີ່ຈຳແກ້ບໍ່ໄດ້-ເພາະມັນຈັກເກີດຄວາມທຸກຂ໌ ຖ້າເຮົາໄປແກ້ໄຂໃນສິ່ງທີ່ແກ້ບໍ່ໄດ້

(16)ລູກຈັກເວົ້າກັບໃຜ ຈົ່ງເບິ່ງໃຫ້ໄດ້ເຖິງລັກສະນະຂອງເຂົາວ່າ ເຂົາເປັນຄົນພານ ຫຼືບັນຮິດຊຶ່ງຜູ້ທີ່ເປັນບັນຮິດນັ້ນ ຈະບໍ່ປົກກະຕິ ຄິດດີເວົ້າດີຢູ່ສເມີ ສວ່ນຜູ້ທີ່ເປັນຕົວພານນັ້ນຈັກບໍ່ປົກຕິ ຄິດຊົ່ວທຳຊົ່ວ ເວົ້າຊົ່ວ ເປັນນິຈສິນ

(17)ໃນລັກສະນະຂອງຄົນພານໄດ້ແກ່-**1**-ມັກຊັກຊວນເຮົາໄປໃນທາງທີ່ບໍ່ຖືກບໍ່ຄວນ-**2**)ມັກຍຸ້ງເຣື້ອງອັນບໍ່ໄຊ້ທຸຣະຂອງຕົນ-**3**-ມັກຕິແລະວິຈານໃນທາງເສັຽຫາຍ-**4**-ສວ່ນຄົນພານນັ້ນແມ່ນເຮົາເວົ້າດີ ໆເຂົາກໍ່ຮາຍ-**5**-ຄົນໆນັ້ນບໍ່ຮູ້ຈັກຣະບຽບແລະວິນັຍຂອງອົງກອນຕາ່ງ ໆ-ຖ້າພົບຄົນພານ ຈົ່ງຫຼີກໃຫ້ໄກໆແຕ່ຢ່າເຮັດໃຫ້ເຂົາຮາ້ຍ ມັນຈັກເກີດເຫັດພັຍໃຫ້ແກ່ຕົນແລະຄອບຄົວ( ອັນນີ້ຈຶ່ງໄດ້ເວົ້າວ່າຣະບຽບ ຂອງການເປັນຜູ້ນຳ ຫຼືຜູ້ກໍ່ຕັ້ງອັນໃດກໍ່ຕາມແຕ່ ຕອ້ງໄຊ້ລັກສະນະນັຍທ້າຍຢ່າງນີ້ມັນຈຶ່ງດີ

(18)ບໍ່ມີອັນໃດທີ່ ພໍ່ແມ່ ຈັກເສັຽໃຈໄປຍິ່ງກົ່ວ ສາມປະການມີ ດັ່ງນີ້-1-ການທີ່ລູກບໍ່ເຄົາຣົບ ພໍ່ແມ່ -2-ການທີ່ລູກ ບໍ່ເຊື່ອຟັງຄຳສອນພໍ່ແມ່-3-ການທີ່ລູກບໍ່ເກັງໃຈພໍ່ແມ່-ການທີ່ລູກບໍ່ເຄົາຣົບບໍ່ເຊື່ອຟັງແລະບໍ່ເກັງໃຈນັ້ນ ປຽບສະເໝືອນລູກໄດ້ທຳລາຍນ້ຳໃຈຂອງພໍ່ແມ່ແລະແມ່ນຢ່າງທີ່ສຸດ ອັນເປັນຄວາມເຈັບປວດແສນຂນາດ-ເມື່ອຮູ້ເຊັ່ນນີ້ແລ້ວ-ລູກຈົ່ງຢ່າທຳ ໆແລະຢ່າກໍ່ຄວາມວຸ້ນວາຍໃຫ້ພໍ່ແມ່

(19)ໃນຄາວທີ່ລູກທຸກໃຈ ໃນຄາວທີ່ລູກກຸ້ມໃຈ ໃນຄາວທີ່ລູກເສັຽໃຈ-ພໍ່ແລະແມ່ ມີສວ່ນສຳຄັນໃນການທີ່ຈັກຊວ່ຍເຫລືອລູກໄດ້ ໃຫ້ລູກເຂົ້າໃຈແລ້ວແນະນຳລູກແລະຄອ່ຍປະຄັບປະຄອງ ໃຫ້ລູກເຂົາໃຈເຖິງການດຳເນີນຊີວິດວ່າ ໄຊ້ວ່າມີເງີນແລ້ວຈັກທຳອັນໃດ ທຸກສິ່ງທຸກຢ່າງມັນຕອ້ງຜິດຫວັງແມ່ເປັນທັມດາເພາະສະນັ້ນ ຢ່າໃຫ້ລູກຍາກຫລາຽເກີນໄປ ເພາະຖ້າຍາກຫລາຽກໍ່ທຸກຫລາຽຍາກນອ້ຍກໍ່ທຸກນອ້ຍ ຖ້າບໍ່ຍາກກໍ່ບໍ່ທຸກ ລູກຈົ່ງຈຳໄວ້ເຖີດ

(20)ລູກຕອ້ງຣະວັງຄົນພິການທາງໃຈໃຫ້ຫລາຽ-ຄົນທີ່ພິການກາຍບໍ່ໃຫ້ເປັນຜິດເປັນພັຍແກ່ໃຜໆ ແຕ່ຖ້າຄົນພິການທາງໃຈ ຍອ່ມສາ້ງຄວາມວຸ້ນວາຽ ຄວາມຍຸ້ງຍາກແກ່ມະນຸສແລະສັຕ ໃຫ້ໄດ້ຮັບຄວາມເດືອນຮອ້ນ ມາກມາຽຫລາຽເທົ່ານັກ-ທີ່ມາທີ່ໄປ-ຄັດລອກເນື້ອຫາທາງຕອນມາຈາກ-ສມຸດບັນທຶກຄົນດີຂອງພໍ່-ຈາກພໍ່ຜູ້ຂຽນບັລຍາຍແທນຄວາມຮູ້ສຶກຂອງພໍ່ ໆທຸກຄົນ

## ອານິສົງ-10-ຂໍ້ ຂອງການບໍ່ກິນຊີ້ນສັດ

ອານິສົງຂັ້ນຕົ້ນຂອງການບໍ່ກິນເນື້ອສັດ ບໍ່ຂ້າສັດແລະບໍ່ບຽດບຽນສັດ ຄື ຈະທຳໃຫ້ຊີວິດຂອງເຮົາ ບໍ່ຕອ້ງຕາຍດວ້ຍ ປືນຜາໜ້າໄມ້ ຄົມຫອກຄົມດາບບໍ່ຕາຍດວ້ຍເຫດການ ອັນໜ້າສຍົດສຍອງຫຼື ພັຍພິບັດຕາ່ງ ໆທັ້ງຍັງສາມາດຕັດກັມ ໃນເຣື້ອງການຂ້າແລະຍຸຕິການຈອ່ງເວັນກັບສັບພະສັດທັງຫລາຽອີກດວ້ຍ -ອົງສົມເດັສພຣະບໍຣົມສາສດາ ພຣະສັມມາສັມພຸທເຈົ້າພຣະຜູ້ເປີ່ຍມະລົ້ນດວ້ຍພຣະເມຕຕາອັຍມິອາຈປະມານໄດ້ ຊົງຮັກໄຄ່ສັບພະສັດທັງຫລາຽ ປະດຸຈລູກໃນອຸທອນຂອງພຣະອົງເອງ ເມື່ອໄດ້ບັນລຸຕະຣະສັມໂພທິຍານສູງສຸດແລ້ວ ກໍ່ຍັງຊົງພຣະທັຍຫວ່ງໃຍປຣາຖນາ ໃຫ້ເວໃນຍະສັດທັງຫລາຽ ໄດ້ຫລຸດພົ້ນອອກຈາກບວ້ງກັມແລະຣະງັບດັບການຈອ່ງເວັນຊຶ່ງກັນແລະກັນ ໃນບັນດາບາບກັມທັງຫລາຽທີ່ຄົນຫລົງຜິດກະທຳໄປ ການບຽດບຽນຂ້າທຳລາຍຊີວິດຜູ້ອື່ນ ຖືເປັນບາບກັມທີ່ຮາ້ຍແຮງທີ່ສຸດ ເຜ່ນວາ່ຈະກະທຳໄປໂດຍບໍ່ເຈັຕນາ ກໍ່ຍັງຕອ້ງໄປຮັບໂທສນັບປະສາອັນໄດກັບການຈົງໃຈເຈັຕນາຂ້າເຂົາໃຫ້ຕາຍໂທສທັນນັ້ນຈະຍິ່ງໃຫ່ຽຫລວງແລະບໍ່ອາຈໃຫ້ອາພັຍໄດ້ດວ້ຍ ເຫດທີ່ພຣະພຸທທະອົງຊົງມີ ພຣະປະສົງຄ໌ຊົງບັນຍັດ ສີນຂໍ້ -ປານາຕິບາຕ-ຄືຫາ້ມການຂ້າເປັນຂໍ້ທີ່ສຳຄັນອັນດັບນຶ່ງ ຂໍໃຫ້ເຮົາຈົ່ງມາຮວ່ມກັນສຶກສາພິຈາຣະນາພຣະພຸທວະຈະນະ -ວາ່ດວ້ຍເຣື້ອງ-ອານິສົງສ໌-10-ຂໍ້ ຂອງການບໍ່ກິນເນື້ອສັດເພື່ອຈັກໄດ້ນຳໄປເປັນແນວທາງ ໃນການປະຕິບັຕແລະບຳເພັນທັມມະໃຫ້ສູງຂຶ້ນໄປ -ໃນພຣະສູຕຂອງພຣະພຸທທະສາສນາມະຫາຍານເລົ່າວາ່-ສມັຍນຶ່ງ-ອົງສົມເດັຈພຣະບໍຣົມສາສດາພຣະສັມມາສັມພຸທເຈົ້າໄດ້ສະເດັຈໄປເທສນາໂປດບັນດາເລົ່າພຣະຍານາຄທັງຫລາຽ ພຣະພຸທອົງໄດ້ຊົງຕັສທັມມະກະພາວິສັຊນາສແດງແກ່ພະຍານາຄະຣາຊ ຄວາມວາ່ບຸກຄົນໄດ ຫຍຸດການຂ້າສັດຕັດຊີວິດແລະງົດເວັ້ນເສັຽຈາກການເສບເລືອດເນື້ອສັຕວ໌ ອີກທັງຍັງຊີ້ນຳສົ່ງເສີມໃຫ້ໝູ່ຊົນທັງຫລາຽຫຍຸດຂ້າ ຫຍຸດເສບຊີວິດເລືອດເນື້ອຜູ້ອື່ນ ບຸກຄົນຜູ້ນັ້ນຍອ່ມຫາ່ງໄກຈາກອະກຸສົນມູນທັງປວງ ແລະບໍຣິບູນພອ້ມດວ້ຍອານິສົງສ໌ ທັງ-10-ປະການອັນໄດ້ແກ່

(1)ເປັນທີ່ຮັກໃຄຣ່ ຂອງບັນດາເທພພົມຕຣອດຈົ່ນມະນຸສແລະສັຕທັງຫລາຽ

(2)ຈິຕອັນເປັນມາຫາເມດຕາ ຍອ່ມບັງເກີດຂຶ້ນ

(3)ສາມາຕຕັດຂາດຄວາມອາຄາຕ ດັບອາຣົມຫຣັ້ມໂຫດຄຽດແຄ້ນໃນໃຈລົງໄດ້

(4)ປຣາສຈາກໂຣຄພັຍຮາ້ຍແຮງ ບຽດບຽນຮາ່ງກາຍ

(5)ມີອາຍຸໝັ້ນຂັ້ວນຍືນ

(6)ໄດ້ຮັບການປົກປອ້ງຄຸ້ມຄອງ ຈາກວັຊຣະເທບທັງແປດ

(7)ຍາມຫລັບນິມິຕ ເຫັນແຕ່ສິ່ງທີ່ດີເປັນງາມສີຣິມົງຄົນ

(8)ຍອ່ມຣະງັບການຈອ່ງເວັນ ສລາຍຄວາມອາຄາຕແຄ້ນຊຶ່ງກັນແລະກັນ

(9)ສາມາດດຳລົງຢູ່ໃນກະແສແຫ່ງນິບພານ ບໍ່ພັດລົງຕົກລົງສູ່ອະບາຍພູມີ

(10)ທັນທີ-ທີ່ລະສັງຂານຈາກໂລກນີ້ ຈິຕຍານຈະມຸ້ງສູ່ຄະຕິພົບ

ພຣະທັມວິນັຍສາຍຕົງ(ເພຣະວາທ)ບໍ່ຫາ້ມພິກສູສັນເນື້ອສັຕທີ່ຂຣາວາສນຳມາຖວາຍ

( ຍົກເວັ້ນຊີ້ນ -10-ປາ່ງແລະຊີ້ນທີ່ສົງສັຍວາ່ຂຣາວາສຈົງໃຈສັງຫານສັຕ ໂຕນັ້ນເພື່ອນຳມາຖວາຍ)ແລະ
ພຣະພິກສຸທີ່ສຳເຣັຈອໍຣະຫັນຕະຜົນມາກມາຍ ທັງໃນປັຈຈຸບັນທີ່ອັຖຂອງທາ່ນ ເປັນພຣະທາຕແລ້ວທາ່ນກໍ່
ສັນຊີ້ນສັຕທີ່ຖືກຕອ້ງ ຕາມພຣະທັມວິນັຍ -ການສຳ້ງອຈ້າງອີງສິ່ງນອກພຣະທັມວິນັຍ ເພື່ອສນັບສນູນຄວາມ
ເຊື່ອຂອງຕົນ ເປັນສິ່ງບໍ່ສົມຄວນປາ່ງຍິ່ງການຣະລຶກເຖິງກາຍ ຂອງຕົນໆວາ່ຕອ້ງການອາຫານພຽງພໍ
ເພື່ອລອ້ຽງດູສັງຂານ ໄດ້ດຳເນີນຕໍ່ໄປເພື່ອການກຳຈັດກິເລສຕາ່ງຫາກ ທີ່ສົມຄວນນຳມາປະຕິບັຕ

ພາຍຫລັງທີ່ພຣະພຸທເຈົ້າ ເຂົ້າສູ່ປະຣິນິພານແລ້ວ ພຣະພຸທທະສາສນາໄດ້ແຜ່ເຂົ້າໄປໃນປະເທສຈີນ
ແຍກອອກເປັນນິກາຍ -ອາຈານຍະວາທ -ຫຣື ມະຫາຍານ -ແລະຂຍາຍມາທາງໄຕ້ຂອງອິນເອັຽຖືວາ່ເປັນ
ເພຣະວາທ -ຫຣື ຫີນະຍານ -ຝາ່ຍມະຫາຍານຍຶດຫລັກແຫ່ງເມດຕາທັມ ມີວັຕປະຕິບັຕທີ່ສຳຄັນປາ່ງນຶ່ງ ຄື
ສັນພັຕຕາຫານເຈ -ຄັມພີສຳຄັນຂອງມະຫາຍານ -4 -ພຣະສູຕຊຶ່ງເຊື່ອກັນວາ່ເປັນພຣະພຸທທະວັຈນະ
ໄດ້ບັນຍັຕຫາ້ມການກິນຊີ້ນສັຕ ຄື ຫັສຕິກັກສະຍະ -ມະຫາເມຄະ -ນິຣະວາງຄຸລີ -ມາລິກາແລະລັງກາ
ວະຕານ -ທາ່ນພຸທທະທາສໄດ້ແປບາງຕອນ ໃນລັງກາວະຕານສູຕ ມີຄວາມວາ່- ໂອ ມະຫາບັນຣິຕໃນວັຖ
ສົງສານອັນບໍ່ມີໃຜຊາບທີ່ສຸດ ໃນເບື້ອງຕົ້ນນີ້ສັຕຜູ້ມີຊີບໄດ້ພາກັນຫອ້ງຫວ່ອໄປໃນການວຽນວາຍໃນການ
ເກີດອີກ ຕາຍອີກ ບໍ່ມີສັຕແຕ່ຕົວດຽວທີ່ໃນບາງສມັຍບໍ່ເຄີຍເປັນແມ່ເປັນພໍ່ -ເປັນອາ້ຍເອື້ອຍລູກຊາຍລູກ
ສາວ ຫຣື ເຄືອຍາຕປາ່ງອື່ນໆແກ່ກັນ ສັຕຕົວດຽວກັນຍອ່ມຖືປະຖິສົນທິໃນພົບຕາ່ງ ໆເປັນກວາງ ຫຼືສັຕ
ສອງຕີນສັຕສີ່ຕີນອື່ນ ໆເຊັ່ນເປັນນົກເປັນໄກ່ຊຶ່ງຍັງນັບໄດ້ວາ່ເປັນເຄືອຍາຕ ຂອງເຣົາໂດຍຕົງ

ສາວົກແຫ່ງພຣະພຸທສາສນາ ຈະເຣັດລົງໄປໄດ້ປາ່ງໃດໜໍຈະເປັນຜູ້ສຳເຣັຈແລ້ວຫຼືຍັງ ເປັນສາວົກ
ທັມມະດາຢູ່ກໍ່ຕາມ ຜູ້ເຫັນວາ່ສັຕເລົ່ານີ້ທັງເບີດເປັນພະຣາດອນຂອງຕົນ ແລ້ວຈະປາດຊີ້ນໜັງຂອງມັນ
ອີກຫຣື -ແລະອີກບາງຕອນມີຄວາມວາ່-ເພາະສະນັ້ນຊີ້ນທຸກຊນິດເປັນສິ່ງທີ່ບໍ່ຄວນບໍຣິໂພກ ສຳຫຣັບ
ພຸທທະສາສະນິກະຊົນຜູ້ປາຖນາຈະມີສາທຸຄຸນໃນທາງຈິຕ- ທັງເພື່ອຕົນເອງແລະຜູ້ອື່ນ ນັກກິນຊີ້ນຍອ່ມ
ເປັນເຍື່ອແຫ່ງໂລກຫລາຽຊນິດ ເຊັ່ນໂຣຄໃສ້ເດືອນໂຣຄພະຍາທ ໂຣຄເຮື້ອນໄຂ່ເຈັບໃນທອງ- ໂອ ມະຫາ
ບັນຣິຕເຣົາກຳລັງປະກາສວາ່ ການກິນຊີ້ນສັຕເປັນການກິນຊີ້ນ ບຸຕຂອງຕົນເອງຢູ່ດັ່ງນີ້ ແລ້ວຈະກາ່ວ
ໄປປາ່ງໃດໄດ້ ທີ່ເຣົາຈະບັນຍັຕໃຫ້ສາວົກຂອງເຣົາ ກິນຊີ້ນສັຕຊຶ່ງເປັນຂອງຈັດໄວ້ຕອ້ນຮັບຂອງພວກຄົນ
ໃຈອຳມະຫິຕເປັນຂອງຖືກຫາ້ມ ໂດຍທາ່ນສັຕບຸຣຸສທົ່ວໄປ -ເຕັມໄປດວ້ຍມົນທິນ ປຣາສຈາກຄຸນທັມໄດໆ

ບໍ່ເໝາະທີ່ຈະບໍຣິໂພຄສຳຫລັບຜູ້ບໍຣິສຸທ ແລະເປັນຂອງຄວນຫາ້ມເດັດຂາດ ໂດຍປະການທັງປວງແລະ
ບັນຫາທີ່ຖົກຖຽງກັນບໍ່ເປັນຂໍ້ຍຸຕິ ຄື ຣະຫວາ່ງຜູ້ຂາ້ກັບຜູ້ກິນ -ໃຜຄືຜູ້ຮັບບາບໃນດັ່ງກາ່ວຕາມສູຕໄດ້ກາ່ວ
ເອົາໄວ້ຊັດເຈນວາ່-ເຂົາຜູ້ຂາ້ສັຕຊນິດໃດ ໆກໍ່ຕາມເພື່ອເງິນ ແລະເຂົາຜູ້ຊຶ່ງຈາ່ຍເງິນຊື້ຊີ້ນນັ້ນ ທັງສອງ
ພວກໄດ້ຊື່ວາ່ເປັນຜູ້ປະກອບກຸສົນກັມ ຈັກຈົມລົງໃນນະຣົກໂຣວະແລະນະຣົກ(ລ) -ສວ່ນພຸທທະສາສນາ
ຝາ່ຍຫີນະຍານ ຍຶດຖືເອົາຄັມພີຣ໌ ວິສຸທທິມັຄຂອງພຣະພຸທທະໂຄສາຈານ -ຊຶ່ງແຕ່ງເມື່ອປະມານ -ພ ສ-
900 -ໄດ້ກຳໜົດໂດຍອາ້ງວາ່ ເປັນພຣະພຸທທະວະຈະນະ ຫາມກິນຊີ້ນສັຕສິບປາ່ງ ຄື-ມະນຸສ-ຊາ້ງ-ມາ້
ສຸນັຂ -ງູ-ຣາສສີຫ໌ -ເສືອໂຄ່ງ -ເສືອເຫລືອງ -ໝີ -ແລະຊີ້ນເສືອດາວນອກນັ້ນສັນໄດ້ ແຕ່ຕອ້ງບໍ່ຢູ່ໃນຂໍ້ກຳ
ໜົດອີກສາມປະການ ຄື ໄດ້ຍິນໄດ້ເຫັນແລະເຈາະຈົງ

ແຕ່ຕາມຫລັກຖານຄົ້ນພົບໃໝ່ກ່າວວ່າ ພຸທທະສາສນາຫີນະຍານແຕ່ເດີມນັ້ນ ບໍ່ໄດ້ສັນເນື້ອສັດ-ໂດຍມີ ຫລັກຖານວ່າພຣະພຸທທະເຈົ້າສເດັດມາເຖີງລັງກາ-3-ຄັ້ງ ພຣະສາຍລັງກາວົງຄ໌ ແທ້ຈິງບໍ່ກິນຊີ້ນສັຕວ໌ ແຕ່ພໍໄປຈາກສຍາມວົງຄ໌ ໃນພາຍຫລັງຈຶ່ງຫັນມາສັນຊີ້ນສັຕ ປັນຫາທີ່ຄ້າງຄາໃຈ ພຸທທະສາສນິກະ ຊົນກໍ່ຄື-ພຣະພຸທທະເຈົ້າສເວີຍຊີ້ນສັຕ ຫຼືບໍ່ ຜູ້ທີ່ຕອບວ່າ-ສເວີຍ-ກັບ-ບໍ່ສເວີຍ-ຕ່າງບໍ່ເຄີຍເຫັນ ພຣະພຸທທະເຈົ້າອົງສເວີຍ-ເພາະສະນັ້ນຜູ້ໄປຈຶ່ງເປັນ-ທຸວາຈາ-ຄື ຄຳເວົ້າຊົ່ວກໍ່ນາຣົກໃຫ້ແກ່ຕົວເອງ ແຕ່ມີຂໍ້ ຄວນພິຈາຣະນາດວ້ຍປັນຍາຂອງຕົນເອງຢູ່-3-ປະການຄື ປະການແຣກອາຫານສາມມື້ຂອງ ພຣະພຸທທະອົງ ເປັນພັຕຕາຫານມັງສະວິຣັຕ ທັງສິ້ນ ຄື

ກ່ອນຕຣັສຮູ້ສເວີຍເຂົ້າມະທຸປາຍາສ ຊຶ່ງນາງສຸຊາດາຖວາຍຣຸກຂເທວະດາ-ຕຣັສຮູ້ແລ້ວນາຍວາ ນິຊສອງພີ່ນອ້ງນຳເຂົ້າ ສັດຕຸຜົງມາຖວາຍແລະມື້ສຸດທ້າຍທີ່ເປັນປັນຫາຄື-ສູກອນມັທວະ-ທີ່ນາຍຈຸນ ທະນຳມາຖວາຍນັ້ນແປກັນວ່າ-ເນື້ອສຸກອນອ່ອນ-ເປັນຄຳແປທີ່ຜິດ ທ່ານພຸທທະທາສພິກຂຸ ແປວ່າ ສິ່ງທີ່ໝູຊອບ-ຄືເຫັດຊນິດນຶ່ງຝັງຢູ່ໃຕ້ດິນ ພາສາປັກໄຕ້ເອີ້ນວ່າ-ລູກບຸກ-ພາສາອັງກິສເອີ້ນວ່າເຫັດ ຊນິດນີ້ວ່າ-Truffle-ມີສີດຳກັບສີນ້ຳຕານ ເວລາຫາເຫັດຊນິດນີ້ຕອ້ງພາໝູ່ໄປດວ້ຍ

ເພາະຮູດັງໝູ່ໃວຕໍ່ກິ່ນເຫັດນີ້ເປັນພິເສສ ເພາະສະນັ້ນຈຶ່ງບໍ່ຕອ້ງສົງສັຍວ່າ ພັດຕາຫານມື້ສຸດທ້າຍ ຂອງພຣະພຸທທະອົງເປັນໝູ ຫຣື ເຫັດ- ປະການທີສອງປັນຫາທີ່ພຣະເທວະທັຕທູນຕໍ່ພຣະພຸທທະອົງ ໃຫ້ ບັງຄັບສາວົກທັງປວງ ສັນອາຫານມັງສະວິຣັຕ-ແລະພຣະພຸທທະອົງ ຊົງບໍ່ອະນຸມັຕຕາມຄຳຂໍນີ້ມາແປ ຄວາມວ່າ ພຣະພິກສຸສັນອາຫານຊີ້ນສັຕເປັນປົກຕິ-ເປັນຫຍັງຈຶ່ງບໍ່ແປຄວາມໝາຍວ່າ-ການທີ່ພຣະພຸທ ທະອົງ ຊົງບໍ່ອະນຸມັຕເພາະການບັງຄັບຍອ່ມເປັນໄປບໍ່ໄດ້ ເນື່ອງດວ້ຍການກິນເປັນເຣື້ອງສະເພາະຕົວບັງ ຄັບກິນບໍ່ໄດ້ຖ້າຫາກກົດຂຶ້ນມາແລ້ວ-ຍອ່ມມີຜູ້ຮັກສາກົດການກິນທີ່ຕອ້ງຄຸມຕົວເອງ ບໍ່ມີໃຜຄຸມໃຜໄດ້ປະ ການສຸດທ້າຍພຣະພຸທທະອົງຊົງສອນເວໃນຍະສັຕທັງປວງໃຫ້ຮັກສາເບັນຈະສີນ ຊຶ່ງຂໍ້ທີ່ນຶ່ງ ຄື ຫ້າມບຽດ ບຽນຊີວິດສັຕ-ເມື່ອພຣະພຸທທະອົງສອນເຊັ່ນນີ້ ຍອ່ມປະຕິບັຕໄດ້ເປັນນິຈສີນຢູ່ແລ້ວ ຫາກສເວີຍຊີ້ນສັຕ ຍອ່ມຢູ່ໃນຖານະສອນຢ່າງນຶ່ງ ແຕ່ປະຕິບັຕອີກຢ່າງນຶ່ງ-ຍອ່ມຖືກຕຳໜິຕິຕຽນຈາກຜູ້ຄົນຂອງລັດທິອື່ນ ຢ່າງແນ່ນອນ ເຖີງຈະກິນ ໂດຍຈິດວ່າງບໍ່ຍຶດໝັ້ນຖືໝັ້ນ

ກໍ່ລອງ ໃຜຄວນຈາກຄຳເວົ້າຕໍ່ໄປນີ້-ກິນໝູກໍ່ຢ່າໝາຍຄວາມວ່າເປັນໝູກໍ່ບໍ່ບາບ-ຄົນກິນໝູເວົ້າຢ່າງນີ້ ວ່າ-ໝູມັນຍິນຍອມພອ້ມໃຈໃຫ້ໝາຽຢ່າງນີ້ຫຼື(**ຄົນບໍ່ກິນໝູຕອບ**)ການກິນຊີ້ນກັບກິນຜັກເປັນປັນຫາ ທີ່ ຖົກຖຽງກັນບໍ່ມີຂໍ້ຍຸດຕິເພາະກໍ່ມີເຫດຜົນຂອງຕົນເອງ-ເພາະສະນັ້ນຄວນຍຸດຕິປັນຫານີ້ ດວ້ຍການເຄົາຣົບ ສິດທິຊຶ່ງກັນແລະກັນ ໃຜມີສະຕິປັນຍາເຫັນຢ່າງໃດ ກໍ່ກິນໄປຕາມທີ່ຕົນເອງເຊື່ອເພາະຕາມສັຈທັມ ໃຜປະ ກອບກັມເຊັ່ນໃດຍອ່ມໄຫ້ຜົນເຊັ່ນນັ້ນ ບໍ່ຈຳເປັນຕອ້ງມາທະເລາະກັນ ດວ້ຍຄວາມທີ່ແຕກຕ່າງກັນເລີຍ

*ຄົນລາວຊາວພຸທ ຄວນຊອກຫາທາງສິນທັມເພື່ອນຳໄປສູ່ຄວາມຈະເຣີນແກ່ປວງຊົນ*

*ຈາກສູນກາງ ສັນພູໝອກ ນະຄອນວຽງຈັນ*

*ໃນນາມລາວອິສຣະ*